ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------==X()X=--------

<u>ອົງການອະທິໄອຍະການ</u> /ລກທີ..໐໒../ອອປ

<u>ປະຊາຊົນ ແຫ່ງ ສປປລ</u>

<u>ຄຳແນະນຳ</u>

ເ ຖິ ງ : ໄອຍະການປະຊາຊົນກຳແພງນະຄອນວຽງຈັນ.

<u>/ເລື່ອງ :</u> ການຈັດຕັ້ງກວດກາການປະຕິບັດກົດໝາຍ ໃນຄ້າຍຄຸມຂັງ-ດັດສ້າງ ທີ່ຂຶ້ນກັບກຳແພງນະຄອນ.

ເພື່ອປະຕິບັດຕາມກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປລ ອະທິໄອຍະການປະຊາຊົນ ແນະນຳໃຫ້ ໄອຍະການປະຊາຊົນກຳແພງນະຄອນ ຈົ່ງສ້າງແຜນການລົງກວດກາຄ້າຍຄຸມຂັງ-ດັດສ້າງທີ່ຂຶ້ນກັບຕົນດັ່ງນີ້ :

1.) ສ້າງແຜນການລົງກວດກາຄ້າຍຄຸມຂັງ-ດັດສ້າງທາດຄຳ ແລະ ນະຄອນບານທີ່ຂຶ້ນກັບຕົນ.

2.) ໃຫ້ຈັດພິມຮ່າງໃບສຳຫຼວດຕົນເອງ ( ທີ່ໄດ້ຕິດຂັດມາພ້ອມນີ້ ) ມອບໃຫ້ຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງນຳພາ (ຜູ້ຖືກຫາ,ຈຳເລີຍ, ນັກໂທດ ຂຽນໝົດທຸກຄົນ).

3.) ໃຫ້ຈັດການເອົາຮ່າງບັນຊີ ແລະ ສະຖິຕິລວມຍອດຜູ້ຖືກຫາ, ນັກໂທດທີ່ໄດ້ສົ່ງມາໃຫ້ໄອຍະການປະຊາຊົນ ກຳແພງນະຄອນ ກ່ອນໜ້ານີ້.

4.) ໃຫ້ເຮັດບົດສະຫຼຸບຕາມຮ່າງ (ທີ່ໄດ້ຂັດຕິດມາພ້ອມນີ້).

5.) ກຳນົດເວລາສົ່ງວັນທີ 25-12-97 ໃຫ້ສົ່ງເຖິງອົງການອະທິໄອຍະການປະຊາຊົນ ແຫ່ງ ສປປລ.

ດັ່ງນັ້ນ ຈຶ່ງໄດ້ອອກຄຳແນະນຳສະບັບນີ້ເພື່ອຈະໄດ້ຈັດຕັ້ງປະຕິບັດໃນເວລາອັນຄວນດ້ວຍ.

ວຽງຈັນ,ວັນທີ...10.12.1997

ອະທິໄອຍະການປະຊາຊົນ.

ອົງການອະທິໄອຍະການປະຊາຊົນ

ກິສົງ ສົນພັນງາມ